ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------000------

ສໍານັກງານນາຍົກລັດຖະມົນຕີ

ເລກທີ 168 /ນຍ

ນະຄອນຫລວງວຽງຈັນ, ວັນທີ 22-11-2004

# ດໍາລັດ

## ວ່າດ້ວຍການຄຸ້ມຄອງ ແລະ ນໍາໃຊ້ ການຊ່ວຍເຫຼືອທາງການເພື່ອການພັດທະນາ

- ອີງຕາມ ລັດຖະທໍາມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 32/ສປປ, ລົງວັນທີ 28 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 34/ສປປ, ລົງວັນທີ 30 ພຶດສະພາ 2003.

## ນາຍົກລັດຖະມົນຕີ ອອກດໍາລັດ :

## ໝວດທີ I

## ວ່າດ້ວຍບົດບັນຍັດທົ່ວໄປ

<u>ມາດຕາ 1</u>: ການຊ່ວຍເຫຼືອທາງການເພື່ອການພັດທະນາ ຊຶ່ງຕໍ່ໄປນີ້ ຂຽນຫຍໍ້ວ່າ "ຊ.ກ.ພ" ປະກອບດ້ວຍ 2 ປະເພດ ຄື: ການຊ່ວຍເຫຼືອລ້າ ແລະ ການກູ້ຢືມດ້ວຍເງື່ອນໄຂຜ່ອນຜັນ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບຈາກຕ່າງປະເທດ ເຊັ່ນ: ລັດຖະບານ, ສະຖາບັນການ ເງິນສາກົນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ກອງທຶນ, ມູນນິທິ, ບຸກຄົນ ແລະ ອື່ນໆ ຈາກພາຍນອກ.

<u>ມາດຕາ 2</u>: ສປປ ລາວ ຮັບເອົາ ຊ.ກ.ພ. ບົນພື້ນຖານການເຄົາລົບເອກະລາດ, ອະທິປະໄຕ ແລະ ບັນດາລະບຽບກົດໝາຍຂອງ ສປປ ລາວ ແລະ ນໍາໃຊ້ ຊ.ກ.ພ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມແຜນງານບຸລິມະສິດຂອງລັດຖະບານ ເພື່ອບັນລຸຈຸດໝາຍຊຸກຍູ້ການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ເຮັດໃຫ້ປະເທດຊາດຫລຸດພົ້ນອອກຈາກສະພາວະດ້ອຍພັດທະນາ. ເພື່ອບັນລຸຈຸດປະສົງດັ່ງກ່າວ ລັດຖະບານຈະນໍາໃຊ້ ຊ.ກ.ພ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

**ມາດຕາ 3:** ຊ.ກ.ພ ປະກອບມີບັນດາຮູບການດັ່ງນີ້ :

1. ການຊ່ວຍເຫລືອລ້າ/ການກູ້ຢືມເປັນແຜນງານ
2. ການຊ່ວຍເຫລືອລ້າ/ການກູ້ຢືມເປັນໂຄງການ
3. ການຊ່ວຍເຫລືອລ້າ/ການກູ້ຢືມບໍ່ເປັນໂຄງການ
4. ການຊ່ວຍເຫລືອລ້າດ້ານວິຊາການ
5. ຮູບການຊ່ວຍເຫຼືອລ້າອື່ນໆ

**ມາດຕາ 4:** ສປປ ລາວ ຖືເອົາ ຊ.ກ.ພ ໃນຮູບແບບການຊ່ວຍເຫຼືອລ້າ ເປັນບຸລິມະສິດສູງສຸດ ແລະ ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະແຜນໂຄງການ ໃນຂົງເຂດເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

ສປປ ລາວ ຈະນຳໃຊ້ ຊ.ກ.ພ ໃນຮູບແບບການກູ້ຢືມດ້ວຍເງື່ອນໄຂຜ່ອນຜັນ ເຂົ້າໃນການກໍ່ສ້າງ ແລະຍົກລະດັບພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ແລະ ການຜະລິດສິນຄ້າຕາມທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 5:** ການລະດົມທຶນ ຊ.ກ.ພ ຈະຕ້ອງອີງໃສ່ຍຸດທະສາດການເຕີບໂຕແລະລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ແຜນງານ/ໂຄງການບຸລິມະສິດ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

## ໝວດທີ II

## ວ່າດ້ວຍການອະນຸມັດ, ການກະກຽມ, ການເຈລະຈາ ແລະ ການເຊັນສັນຍາ ຮັບເອົາການຊ່ວຍເຫຼືອທາງການ ເພື່ອການພັດທະນາ

**ມາດຕາ 6:** ສິດອຳນາດໃນການອະນຸມັດ ແຜນການ, ແຜນງານ ແລະ ໂຄງການທີ່ນຳໃຊ້ ຊ.ກ.ພ ມີດັ່ງນີ້:

6.1 ລັດຖະບານ ເປັນຜູ້ພິຈາລະນາ ແລະ ອະນຸມັດ:

ກ. ແຜນການຮ່ວມມືກັບຕ່າງປະເທດ ທີ່ເປັນພາກສ່ວນໜຶ່ງ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມການສະເໜີ ຂອງຄະນະກຳມະການແຜນການ ແລະການລົງທຶນ.

ຂ. ແຜນການ, ແຜນງານ ແລະແຜນໂຄງການເງິນກູ້ຢືມ ຕາມການສະເໜີຂອງ ຄະນະກຳມະການແຜນການ ແລະການລົງທຶນ ບົນພື້ນຖານຄວາມເປັນເອກະພາບ ກັບກະຊວງການຕ່າງປະເທດ ແລະ ກະຊວງການເງິນ.

ຄ. ຮັບຮອງເອົາຜົນການປະເມີນໂຄງການຂັ້ນສຸດທ້າຍຂອງໂຄງການເງິນກູ້ຢືມ ຕາມການສະເໜີຂອງກະຊວງການຕ່າງປະເທດ ບົນພື້ນຖານຄວາມເປັນເອກະພາບ ກັບຄະນະກຳມະການແຜນການ ແລະການລົງທຶນ ເພື່ອມອບໃຫ້ກະຊວງການເງິນຈັດຕັ້ງການເຈລະຈາກັບຜູ້ໃຫ້ທຶນ.

ງ. ຮັບຮອງເອົາຜົນການເຈລະຈາໂຄງການເງິນກູ້ຢືມ ຕາມການສະເໜີຂອງກະຊວງການເງິນ.

ຈ. ຮັບຮອງໂຄງການຊ່ວຍເຫລືອລ້າທີ່ບໍ່ບອນຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ຕາມການສະເໜີ ຂອງກະຊວງການຕ່າງປະເທດ ໂດຍຜ່ານ ຄະນະກຳມະການແຜນການ ແລະການລົງທຶນ.

6.2 ກະຊວງການຕ່າງປະເທດ ເປັນຜູ້ພິຈາລະນາ ແລະ ອະນຸມັດ:
ໂຄງການຊ່ວຍເຫຼືອລ້າ ຈາກຕ່າງປະເທດ ທີ່ສອດຄ່ອງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ແລະໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດ.

<u>ມາດຕາ 7</u>: ເອກະສານແຜນງານ/ໂຄງການ ທີ່ໄດ້ຖືກຮັບຮອງ ແລະ ໄດ້ຮັບການອະນຸມັດ ໂດຍສອດຄ່ອງກັບເນື້ອໃນ ມາດຕາ 6 ຂອງດຳລັດສະບັບນີ້ ຈະເປັນພື້ນຖານໃຫ້ແກ່ ການເຈລະຈາ, ລວມທັງການລະດົມທຶນ ແລະ ການເຊັນສັນຍາ ຊ.ກ.ພ.

<u>ມາດຕາ 8</u>: ການກະກຽມຍຸດທະສາດ/ແຜນການຮ່ວມມື, ແຜນງານ/ໂຄງການ, ການເຈລະຈາ, ແລະ ການເຊັນສັນຍາ ຊ.ກ.ພ ກັບຕ່າງປະເທດ:

8.1 ການກະກຽມຍຸດທະສາດ/ແຜນການຮ່ວມມື ແລະ ແຜນງານ/ໂຄງການ:

ກ. ການຊ່ວຍເຫຼືອລ້າ:

- ໃຫ້ກະຊວງການຕ່າງປະເທດດຳເນີນການ ສ້າງຍຸດທະສາດ/ແຜນການຮ່ວມມືກັບຜູ້ໃຫ້ການຊ່ວຍເຫລືອຕ່າງປະເທດ ໂດຍປະສານສົມທົບ ກັບຄະນະກຳມະການແຜນການ ແລະການລົງທຶນ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອບັນຈຸເຂົ້າແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ ຂອງລັດຖະບານ ເພື່ອນຳສະເໜີສະພາແຫ່ງຊາດ ຮັບຮອງ .
- ບົນພື້ນຖານຍຸດທະສາດ/ແຜນການດັ່ງກ່າວ, ໃຫ້ກະຊວງ, ອົງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນເຈົ້າການກະກຽມໂຄງການ ໂດຍສົມທົບແໜ້ນ ກັບຄະນະກຳມະການແຜນການ ແລະການລົງທຶນ ແລ້ວນຳສະເໜີ ກະຊວງການຕ່າງປະເທດ ເພື່ອພິຈາລະນາອະນຸມັດ.

ຂ. ການກູ້ຢືມ:

- ໃຫ້ກະຊວງການຕ່າງປະເທດ ເປັນຜູ້ດຳເນີນການສ້າງຍຸດທະສາດ/ແຜນການກູ້ຢືມ ຈາກຕ່າງປະເທດ ໂດຍປະສານສົມທົບກັບຄະນະກຳມະການແຜນການ ແລະການລົງທຶນ, ກະຊວງການເງິນ, ບັນດາກະຊວງ, ອົງການ ແລະທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອບັນຈຸເຂົ້າແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ ຂອງລັດຖະບານ ເພື່ອນຳສະເໜີສະພາແຫ່ງຊາດ ຮັບຮອງ.

- ຄະນະກຳມະການແຜນການ ແລະການລົງທຶນ ປະສານສົມທົບກັບກະຊວງການຕ່າງປະເທດ ແລະ ກະຊວງການເງິນ ເພື່ອທົບທວນ ແລະຢັ້ງຢືນຄືນໃນແຕ່ລະປີ ກ່ຽວກັບການກູ້ຢືມ ແລ້ວແຈ້ງໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຊາບ.
- ໃຫ້ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບ ຄະນະກຳມະການແຜນການ ແລະການລົງທຶນ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ກະກຽມໂຄງການເງິນກູ້ຢືມ ຕາມຂັ້ນຕອນ ນັບຕັ້ງແຕ່ການ ກະກຽມຂໍ້ມູນເບື້ອງຕົ້ນ ຈົນຮອດການປະເມີນໂຄງການຂັ້ນສຸດທ້າຍ ແລ້ວນຳສະເໜີ ເພື່ອຂໍອະນຸມັດຈາກລັດຖະບານ.

8.2 ການເຈລະຈາ:

ກ. ການຊ່ວຍເຫຼືອລ້າ:

- ກະຊວງການຕ່າງປະເທດເປັນໃຈກາງສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການເຈລະຈາ ເພື່ອເຊັນສັນຍາແມ່ ຫລື ສັນຍາແຜນງານ/ໂຄງການໂດຍລວມ.
- ໃຫ້ກະຊວງ, ອົງການ ແລະທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ເປັນເຈົ້າຂອງໂຄງການ ເປັນເຈົ້າການດຳເນີນການເຈລະຈາ ເພື່ອເຊັນສັນຍາ ແຜນງານ/ໂຄງການ ສະເພາະ .

ຂ. ການກູ້ຢືມ:

- ກະຊວງການຕ່າງປະເທດ ເປັນໃຈກາງສົມທົບກັບ ຄະນະກຳມະການແຜນການ ແລະການລົງທຶນ, ກະຊວງການເງິນ ແລະພາກສ່ວນກ່ຽວຂ້ອງ ດຳເນີນການເຈລະຈາກັບຕ່າງປະເທດ ກ່ຽວກັບຍຸດທະສາດ/ແຜນການກູ້ຢືມໂດຍລວມ.
- ບົນພື້ນຖານຍຸດທະສາດ/ແຜນການກູ້ຢືມ ແລະ ການອະນຸມັດ ຂອງລັດຖະບານ, ມອບໃຫ້ກະຊວງການເງິນດຳເນີນການເຈລະຈາໂຄງການເງິນກູ້ສະເພາະ ໂດຍສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.
- ກະຊວງການເງິນ ແຕ່ງຕັ້ງຄະນະເຈລະຈາເງິນກູ້ ແລະ ລາຍງານຜົນຂອງການເຈລະຈາເງິນກູ້ດັ່ງກ່າວ ໃຫ້ລັດຖະບານ ເພື່ອພິຈາລະນາຮັບຮອງ. ພາຍຫລັງ ລັດຖະບານຮັບຮອງເອົາແລ້ວ, ກະຊວງການເງິນ ມີໜ້າທີ່ແຈ້ງ ຜົນການຮັບຮອງຂອງລັດຖະບານ ໃຫ້ຄະນະກຳມະການແຜນການ ແລະການລົງທຶນ ແລະ ກະຊວງການຕ່າງປະເທດ ຮັບຊາບນຳ.

8.3 ການເຊັນສັນຍາ:

ກ. ການຊ່ວຍເຫຼືອລ້າ:

- ກະຊວງການຕ່າງປະເທດ ເປັນຜູ້ເຊັນສັນຍາແມ່ ຫລື ສັນຍາແຜນງານ/ໂຄງການຊ່ວຍເຫລືອລ້າ ທີ່ມີລັກສະນະກວມລວມ, ພົວພັນກັບຫລາຍຂະແໜງການ ແລະ ແຜນສັນຍາໂຄງການຊ່ວຍເຫລືອລ້າທາງດ້ານວິຊາການ ທີ່ປະກອບເປັນທຶນສົມທົບ ຫລື ທຶນເຂົ້າຮ່ວມ ກັບໂຄງການເງິນກູ້ຢືມ ຈາກຕ່າງປະເທດ.

- ກະຊວງການຕ່າງປະເທດ ມອບສິດໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເຊັນສັນຍາໂຄງການຊ່ວຍເຫລືອລ້າທີ່ມີລັກສະນະສະເພາະ ກັບຕ່າງປະເທດ.
- ກະຊວງການຕ່າງປະເທດ ມອບສິດໃຫ້ກະຊວງການເງິນ ເປັນຜູ້ເຊັນສັນຍາຊ່ວຍເຫລືອລ້າທາງດ້ານວິຊາການ ເພື່ອກະກຽມໃຫ້ແກ່ການສ້າງໂຄງການເງິນກູ້ຢືມ ຈາກຕ່າງປະເທດ.

ຂ. ການກູ້ຢືມ:

ລັດຖະບານມອບສິດໃຫ້ ກະຊວງການເງິນ ຫຼື ຜູ້ທີ່ໄດ້ຮັບມອບສິດ ເປັນຜູ້ຕາງໜ້າລັດຖະບານ ແຫ່ງ ສປປ ລາວ ເຊັນສັນຍາກູ້ຢືມກັບຕ່າງປະເທດ.

## ໝວດທີ III

## ວ່າດ້ວຍ ສິດ ແລະໜ້າທີ່ ຂອງລັດຖະບານ, ບັນດາ ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ຊ.ກ.ພ

<u>ມາດຕາ 9</u>: ລັດຖະບານ ເປັນຜູ້ຄຸ້ມຄອງ ຊ.ກ.ພ ຢ່າງລວມສູນ ເພື່ອນຳໃຊ້ ຢ່າງມີປະສິດທິຜົນ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ກຳນົດທິດທາງເພື່ອຍາດແຍ່ງ ແລະ ລະດົມ ຊ.ກ.ພ; ຕົກລົງ ກ່ຽວກັບການເຈລະຈາ, ການເຊັນສັນຍາ, ການດັດແກ້ ຫຼື ລົບລ້າງສັນຍາ ຊ.ກ.ພ ກັບຕ່າງປະເທດ; ຮັບຮອງເອົາການຈັດແບ່ງ ຊ.ກ.ພ ແລະ ການຕອບສະໜອງທຶນສົມທົບຂອງລັດຖະບານ ເພື່ອປະຕິບັດແຜນງານ/ໂຄງການ ຊ.ກ.ພ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ປະຈຳປີ; ຊີ້ນຳ ການຕິດຕາມ, ກວດກາການຈັດຕັ້ງປະຕິບັດ ແລະ ປະເມີນຜົນການນຳໃຊ້ ຊ.ກ.ພ.

<u>ມາດຕາ 10</u>: ຄະນະກຳມະການ ແຜນການ ແລະ ການລົງທຶນ ມີສິດ ແລະໜ້າທີ່ ດັ່ງນີ້:

10.1 ເປັນເຈົ້າການສ້າງຍຸດທະສາດ ແລະ ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ, ລວມທັງແຜນງານ/ໂຄງການຊ່ວຍເຫລືອລ້າ ແລະກູ້ຢືມລະອຽດ ໃນແຕ່ລະໄລຍະ ເພື່ອນຳສະເໜີລັດຖະບານພິຈາລະນາຮັບຮອງ.

10.2 ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຈັດແບ່ງທຶນສົມທົບພາຍໃນປະຈຳປີ ໃຫ້ແກ່ການຈັດຕັ້ງປະຕິບັດ ແຜນງານ/ໂຄງການ ຊ.ກ.ພ ໂດຍສອດຄ່ອງກັບພັນທະທີ່ມີ ຕາມສັນຍາກັບຕ່າງປະເທດ.

10.3 ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນງານ/ໂຄງການ ທີ່ເປັນບຸລິມະສິດສະເພາະ ເພື່ອຜັນຂະຫຍາຍຍຸດທະສາດການເຕີບໂຕ ແລະລຶບລ້າງຄວາມທຸກຍາກແຫ່ງຊາດ.

10.4 ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງໃນການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນແຜນງານ/ໂຄງການ ຊ.ກ.ພ, ລວມທັງການຈັດຝຶກອົບຮົມວິຊາການໃນການຕິດຕາມ ແລະປະເມີນຜົນໂຄງການ.

<u>ມາດຕາ 11</u>: ກະຊວງການເງິນ ມີສິດ ແລະໜ້າທີ່ ດັ່ງນີ້:

11.1 ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກະກຽມແຜນງານ/ໂຄງການເງິນກູ້ຢືມ.

11.2 ເປັນເຈົ້າການກະກຽມເນື້ອໃນຮ່າງສັນຍາເງິນກູ້ຢືມ ໂດຍສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

11.3 ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຫາທຶນສົມທົບ ຂອງລັດຖະບານ ເພື່ອສະໜອງໃຫ້ແກ່ໂຄງການ ຕາມແຜນງົບປະມານ ທີ່ສະພາແຫ່ງຊາດຮັບຮອງ.

11.4 ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນຂັ້ນຕອນອອກຄວາມເຫັນທາງດ້ານກົດໝາຍ ແນໃສ່ເພື່ອເຮັດໃຫ້ສັນຍາເງິນກູ້ຢືມ ມີຜົນສັກສິດນຳໃຊ້ໄດ້.

11.5 ເປັນເຈົ້າການດຳເນີນຂັ້ນຕອນ ການຖອນເງິນຈາກບັນຊີຂອງຜູ້ໃຫ້ທຶນ ແລະ ການຄຸ້ມຄອງການຖືບັນຊີເງິນຂອງໂຄງການ ຊ.ກ.ພ.

11.6 ເປັນເຈົ້າການປະສານສົມທົບກັບຜູ້ໃຫ້ທຶນ ແລະພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຝຶກອົບຮົມ ກ່ຽວກັບລະບຽບການເບີກຈ່າຍທຶນ ຊ.ກ.ພ, ການຄຸ້ມຄອງການເງິນ, ການຈັດຊື້ ແລະການຈັດຈ້າງຊ່ຽວຊານ.

11.7 ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຕິດຕາມ, ກວດກາ ແລະ ຕີລາຄາຜົນ ຂອງການຈັດຕັ້ງປະຕິບັດໂຄງການເງິນກູ້ຢືມໃນແຕ່ລະໄລຍະ.

11.8 ເປັນເຈົ້າການຄຸ້ມຄອງ ແລະ ຕິດຕາມການນຳໃຊ້ຊັບສົມບັດ ຂອງໂຄງການ ທີ່ນຳໃຊ້ທຶນ ຊ.ກ.ພ., ລວມທັງ ຍານພາຫະນະ ແລະ ອຸປະກອນຮັບໃຊ້ອື່ນໆ.

11.9 ເປັນເຈົ້າການຂຶ້ນແຜນເງິນຕາຕ່າງປະເທດ ເພື່ອຊຳລະສະສາງໜີ້ສິນເງິນກູ້ຢືມຈາກຕ່າງປະເທດເປັນແຕ່ລະໄລຍະ.

11.10 ເປັນເຈົ້າການໃນການຄົ້ນຄວ້າເງື່ອນໄຂສັນຍາໃຫ້ກູ້ຢືມຕໍ່ ແກ່ລັດວິສາຫະກິດ ແລະຫົວໜ່ວຍເສດຖະກິດອື່ນໆ.

11.11 ເປັນເຈົ້າການໃນການຕິດຕາມ ແລະສັງລວມການເຄື່ອນໄຫວທາງດ້ານການເງິນ ຂອງວິສາຫະກິດ ທີ່ນຳໃຊ້ທຶນ ຊ.ກ.ພ.

11.12 ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ ແລະ ສະຫລຸບສັງລວມຜົນການຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ ເພື່ອລາຍງານລັດຖະບານຊາບ.

<u>ມາດຕາ 12</u>: ກະຊວງການຕ່າງປະເທດ ມີສິດ ແລະໜ້າທີ່ດັ່ງນີ້:

12.1 ເປັນເຈົ້າການໃນການປະສານງານ ແລະ ລະດົມທຶນ ຊ.ກ. ພ.ຈາກຕ່າງປະເທດ.

12.2 ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກຳນົດນະໂຍບາຍ ແລະ ທິດທາງໃນການລະດົມທຶນ ຊ.ກ.ພ.

12.3 ເປັນເຈົ້າການສ້າງຍຸດທະສາດ/ແຜນການຮ່ວມມື ຊ.ກ.ພ ໃນແຕ່ລະໄລຍະກັບຜູ້ໃຫ້ການຊ່ວຍເຫລືອ ແລະ ດຳເນີນການລະດົມທຶນ ຊ.ກ.ພ ໂດຍສອດຄ່ອງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ລັດຖະບານໄດ້ອະນຸມັດແລ້ວ.

12.4 ປະສານສົມທົບກັບກະຊວງ, ອົງການ ແລະທ້ອງຖິ່ນທີ່ກ່ຽວຂ້ອງ ສັງລວມແຜນການສະໜອງທຶນສົມທົບພາຍໃນ ເພື່ອນຳສະເໜີຄະນະກຳມະການແຜນການ ແລະການລົງທຶນຈັດແບ່ງເຂົ້າໃນ ແຜນງົບປະມານແຫ່ງລັດປະຈຳປີ ໃຫ້ແກ່ແຜນງານ/ໂຄງການ ຊ.ກ.ພ ໂດຍສອດຄ່ອງກັບພັນທະທີ່ມີຕາມສັນຍາກັບຕ່າງປະເທດ.

12.5 ເປັນເຈົ້າການສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການດຳເນີນການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນ ແຜນງານ/ໂຄງການ ຊ.ກ.ພ.

12.6 ເປັນເຈົ້າການດຳເນີນກອງປະຊຸມປະຈຳງວດ, ປະຈຳປີກັບອົງການຜູ້ໃຫ້ທຶນ ຊ.ກ.ພ.

12.7 ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຈັດການຝຶກອົບຮົມ ທາງດ້ານວິຊາການຕ່າງໆ ໃຫ້ພະນັກງານທີ່ປະຕິບັດແຜນງານ/ໂຄງການ ຊ.ກ.ພ.

12.8 ເປັນເຈົ້າການສະເໜີການຍ້ອງຍໍອົງການຈັດຕັ້ງ ແລະ ບຸກຄົນຕ່າງປະເທດ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຊ່ວຍເຫລືອ ສປປ ລາວ.

12.9 ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ ແລະ ສະຫຼຸບສັງລວມ ຜົນຂອງການຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ ເພື່ອລາຍງານໃຫ້ ຄະນະກຳມະການແຜນການແລະການລົງທຶນ ແລະ ລັດຖະບານຊາບ.

<u>ມາດຕາ 13</u>: ທະນາຄານແຫ່ງ ສປປ ລາວ ມີສິດ ແລະໜ້າທີ່ດັ່ງນີ້:

13.1 ປະສານສົມທົບກັບກະຊວງ, ອົງການ ແລະທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກະກຽມ ແລະ ເຈລະຈາ ໂຄງການກູ້ຢືມເງິນດັດແກ້ມະຫາພາກ ຈາກກອງທຶນການເງິນສາກົນ.

13.2 ເປັນເຈົ້າການຄຸ້ມຄອງບັນຊີເງິນ ຕາມແຜນງານ/ໂຄງການກູ້ຢືມຂອງລັດຖະບານ.

<u>ມາດຕາ 14</u>: ກະຊວງຍຸຕິທຳ ມີສິດ ແລະໜ້າທີ່ດັ່ງນີ້:

14.1 ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເຂົ້າຮ່ວມໃນການກະກຽມ ແລະ ເຈລະຈາແຜນງານ/ໂຄງການກູ້ຢືມ.

14.2 ເປັນເຈົ້າການພິຈາລະນາ ແລະ ໃຫ້ຄວາມເຫັນທາງດ້ານກົດໝາຍຕໍ່ເນື້ອໃນສັນຍາ ແຜນງານ/ໂຄງການກູ້ຢືມ.

14.3 ເປັນເຈົ້າການພິຈາລະນາ ແລະ ນຳສະເໜີສະພາແຫ່ງຊາດ ເພື່ອນຳສະເໜີຕໍ່ສຳນັກງານປະທານປະເທດ ອອກຄວາມເຫັນທາງດ້ານກົດໝາຍຕໍ່ເນື້ອໃນສັນຍາ ແຜນງານ/ໂຄງການກູ້ຢືມ ໃນກໍລະນີທີ່ມີຄວາມຈຳເປັນ.

**ມາດຕາ 15:** ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີສິດແລະໜ້າທີ່ ດັ່ງນີ້:

15.1 ເປັນເຈົ້າການສຶກສາ ແລະ ປະເມີນບົດລາຍງານ ກ່ຽວກັບຜົນກະທົບທາງດ້ານສິ່ງແວດລ້ອມ ຂອງແຜນງານ/ໂຄງການ ຊ.ກ.ພ ອີງຕາມການສະເໜີຂອງ ກະຊວງ, ອົງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ.

15.2 ສົມທົບກັບ ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ແຜນງານ/ໂຄງການ ຊ.ກ.ພ ໃນສ່ວນທີ່ກ່ຽວຂ້ອງກັບບັນຫາສິ່ງແວດລ້ອມ.

**ມາດຕາ 16:** ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະໜ້າທີ່ດັ່ງນີ້:

16.1 ເປັນເຈົ້າການຊີ້ນຳກົມ, ກອງ ແລະ ພະແນກການຂອງຕົນ ທີ່ຮັບຜິດຊອບວຽກງານແຜນການ ແລະການລົງທຶນ ເພື່ອຄຸ້ມຄອງແຜນງານ/ໂຄງການ ຊ.ກ.ພ.

16.2 ເປັນເຈົ້າການແຕ່ງຕັ້ງຄະນະຊີ້ນຳ ແລະ ຄະນະຄຸ້ມຄອງໂຄງການຕາມຄວາມເໝາະສົມ.

16.3 ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຮັບຮອງເອົາແຜນວຽກ, ແຜນງົບປະມານ ແລະ ແຜນບຸກຄະລະກອນ ຂອງໂຄງການ.

16.4 ເປັນເຈົ້າການແຕ່ງຕັ້ງ ແລະ ມອບສິດໃຫ້ບຸກຄະລະກອນ ໃນການຈັດຕັ້ງຂອງຕົນ ເປັນຜູ້ເຊັນໜັງສືສະເໜີຂໍເບີກຈ່າຍເງິນ ຂອງໂຄງການ ຊ.ກ.ພ.

16.5 ເປັນເຈົ້າການຊີ້ນຳການສ້າງແຜນງານ/ໂຄງການທີ່ຕ້ອງການທຶນ ຊ.ກ.ພ ຢູ່ໃນຂະແໜງການຂອງຕົນ ແລ້ວນຳສະເໜີເຂົ້າແຜນການລວມ ແລະ ບັນຊີແຜນງານ/ໂຄງການ ຊ.ກ.ພ ທີ່ເປັນບຸລິມະສິດ ໃນແຕ່ລະໄລຍະ.

16.6 ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຝຶກອົບຮົມໃຫ້ແກ່ພະນັກງານຄຸ້ມຄອງແຜນງານ/ໂຄງການ ຊ.ກ.ພ ກ່ຽວກັບລະບຽບການ ຂອງລັດຖະບານ ແລະ ອົງການຜູ້ໃຫ້ທຶນ.

16.7 ເປັນເຈົ້າການກຳນົດບຸລິມະສິດ ແລະ ສະເໜີລັດຖະບານ ເພື່ອສະໜອງທຶນສົມທົບພາຍໃນ ໂດຍສອດຄ່ອງກັບເນື້ອໃນເອກະສານ ແຜນງານ/ໂຄງການ ຊ.ກ.ພ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນງານ/ໂຄງການ.

16.8 ເປັນເຈົ້າການຊີ້ນຳ ຄະນະຊີ້ນຳໂຄງການ ແລະຄະນະໜ່ວຍງານຄຸ້ມຄອງແຜນງານ/ໂຄງການ ຊ.ກ.ພ ໃນການກະກຽມແຜນວຽກ ແລະແຜນຖອນເງິນ ບົນພື້ນຖານເນື້ອໃນຂອງເອກະສານແຜນງານ/ໂຄງການ ຊຶ່ງໄດ້ຖືກຮັບຮອງເອົາແລ້ວ ແລະສັນຍາ ຊ.ກ.ພ ກັບຕ່າງປະເທດ.

16.9 ເປັນເຈົ້າການ ສະຫຼຸບລາຍງານ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແຜນງານ/ໂຄງການ ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ໃຫ້ກະຊວງການຕ່າງປະເທດ, ກະຊວງການເງິນ ແລະ ຄະນະກຳມະການແຜນການ ແລະການລົງທຶນ ຢ່າງເປັນປົກກະຕິ.

## ໝວດທີ IV

## ວ່າດ້ວຍການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆ ທີ່ນຳໃຊ້ທຶນ ຊ.ກ.ພ

<u>ມາດຕາ 17</u>: ການຄຸ້ມຄອງ ແລະ ການນຳໃຊ້ ທຶນ ຊ.ກ.ພ ເຂົ້າໃນໂຄງການຕ່າງໆ ຕ້ອງສອດຄ່ອງກັບ ດຳລັດສະບັບນີ້ ແລະ ລະບຽບຫລັກການການເງິນຂອງ ສປປ ລາວ.

<u>ມາດຕາ 18</u>: ໃຫ້ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ເປັນເຈົ້າຂອງແຜນງານ/ໂຄງການ ເປັນຜູ້ຮັບຜິດຊອບຄຸ້ມຄອງໂດຍກົງ ໃນການຈັດຕັ້ງປະຕິບັດຕົວຈິງ, ຂະແໜງການມະຫາພາກ ມີໜ້າທີ່ຕິດຕາມ, ກວດກາ, ຊຸກຍູ້ໃຫ້ຄຳແນະນຳ ແລະ ອຳນວຍຄວາມສະດວກ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ ບັນລຸຜົນສຳເລັດ ແລະ ມີປະສິດທິຜົນສູງ.

<u>ມາດຕາ 19</u>: ການສິ້ນສຸດໂຄງການ:

- ກ່ອນໂຄງການຈະສິ້ນສຸດລົງ 03 ເດືອນ, ໃຫ້ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ເປັນເຈົ້າຂອງແຜນງານ/ໂຄງການ ລາຍງານກ່ຽວກັບ ການສະຫຼຸບຕີລາຄາຜົນຂອງການຈັດຕັ້ງປະຕິບັດໂຄງການ ໃນໄລຍະຜ່ານມາ ລວມທັງລາຍງານບັນຊີຊັບສົມບັດຂອງໂຄງການ ໃຫ້ກະຊວງການຕ່າງປະເທດ, ກະຊວງການເງິນ ແລະ ຄະນະກຳມະການແຜນການແລະການລົງທຶນ.
- ກະຊວງການຕ່າງປະເທດ, ກະຊວງການເງິນ ແລະ ຄະນະກຳມະການແຜນການແລະການລົງທຶນ ຕ້ອງຈັດກອງປະຊຸມພິຈາລະນາບົດລາຍງານດັ່ງກ່າວ ເພື່ອມີທິດຊີ້ນຳທີ່ເປັນເອກະພາບ ຕໍ່ບົດສະຫລຸບຕີລາຄານັ້ນ. ຕໍ່ຈາກນັ້ນ, ໃຫ້ຈັດກອງປະຊຸມ ກັບພາກສ່ວນທີ່ກ່ຽວຂ້ອງ ຂອງໂຄງການ ແລະ ຜູ້ໃຫ້ທຶນ.
- ພາຍຫຼັງໂຄງການສິ້ນສຸດລົງ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ເປັນເຈົ້າຂອງໂຄງການ ຕ້ອງໄດ້ສະຫຼຸບ, ມອບພາຫະນະ ແລະອຸປະກອນຮັບໃຊ້ວຽກງານຂອງໂຄງການ ໃຫ້ແກ່ກະຊວງການເງິນ ເພື່ອຄຸ້ມຄອງ ແລະ ສະເໜີແຜນແຈກຢາຍຄືນໃໝ່ ໃຫ້ລັດຖະບານຮັບຮອງ.

## ໝວດທີ V

## ວ່າດ້ວຍບົດບັນຍັດສຸດທ້າຍ

<u>ມາດຕາ 20</u>: ມອບໃຫ້ກະຊວງການຕ່າງປະເທດ ອອກບົດແນະນຳລະອຽດ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ກະຊວງການເງິນ ເປັນຜູ້ອອກລະບຽບການ ກ່ຽວກັບ ການຄຸ້ມຄອງ ແລະນຳໃຊ້ເງິນທຶນຂອງໂຄງການ ຊ.ກ.ພ.

<u>ມາດຕາ 21</u>: ທຸກໆກະຊວງ, ອົງການທຽບເທົ່າກະຊວງ ແລະ ທ້ອງຖິ່ນ ມີໜ້າທີ່ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 22</u>: ດຳລັດສະບັບນີ້ປ່ຽນແທນດຳລັດ ສະບັບເລກທີ 208/ນຍ, ລົງວັນທີ 30 ຕຸລາ 2002 ແລະ ມີຜົນສັກສິດນຳໃຊ້ໄດ້ ພາຍຫລັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**



ບຸນຍັງ ວໍລະຈິດ